


Call:
1-888-API-VOTE
(274-8683)
Bilingual assistance is available in English, Mandarin (普通話/普通话), Cantonese (廣東話/广东话), Korean (한국인), Vietnamese (Tiếng Việt), Tagalog, Urdu (اردو), Hindi (हिन्दी), and Bengali (বাংলা).

ASIAN AMERICANS ADVANCING JUSTICE AAJC

CAMBODIAN MUTUAL ASSISTANCE ASSOCIATION CMAA LOWELL, MA

# ທ່ານພ້ອມໃນການໂຫວດບໍ: MASSACHUSETTS?

ປັບປຸງ ວັນທີ 15 ຕຸລາ 2020

<u>ວັນເລືອກຕັ້ງແມ່ນ ວັນອັງຄານ, ວັນທີ 3 ພະຈິກ 2020</u>

**ເມື່ອທ່ານໂຫວດ, ທ່ານມີສິດ:**

☑ ພາຜູ້ໃດໜຶ່ງຕາມ ທີ່ທ່ານເລືອກໄປນຳເພື່ອຊ່ວຍທ່ານໂຫວດໃນບ່ອນລົງຄະແນນ ຫາກທ່ານມີບັນຫາກັບພາສາອັງກິດ.

☑ ຮັບການຊ່ວຍເຫຼືອດ້ານພາສາຈາກລັດຖະບານໃນສະຖານທີ່ໜຶ່ງໆ.

☑ ໂຫວດໂດຍປາສະຈາກການຖືກຂົ່ມຂູ່ ຫລື ຈຳແນກໂດຍຄົນອື່ນ.

➢ ການຂົ່ມຂູ່ ຫຼື ການຈຳແນກໃນການລົງຄະແນນ ອາດເບິ່ງຄືວ່າເປັນ ການລະເມີດທ່ານ ຫລື ການປະຕິເສດທ່ານສຳລັບສິດໃນການໂຫວດ ເນື່ອງຈາກສຳນຽງສຽງຂອງທ່ານ ຫລື ການທ້າທາຍສິດທິຂອງທ່ານໃນການໂຫວດພາຍໃຕ້ ທັດສະນະທີ່ຜິດພາດທີ່ວ່າ ທ່ານບໍ່ໄດ້ຖືສັນຊາດເນື່ອງຈາກເຊື້ອຊາດຂອງທ່ານ.

## ໃຜສາມາດໂຫວດໃນ ລັດ Massachusetts

- ທ່ານຖືສັນຊາດສະຫະລັດ ອາເມຣິກາ ແລະ
- ທ່ານມີອາຍຸ 18 ປີຂຶ້ນໄປ ແລະ
- ປັດຈຸບັນທ່ານບໍ່ໄດ້ຖືກຈຳຄຸກຍ້ອນ ການຕັດສິນວ່າກະທຳຜິດອັນຮ້າຍແຮງ.

*<u>ທ່ານຈະຕ້ອງລົງທະບຽນໂຫວດເພື່ອກາບັດລົງຄະແນນຂອງທ່ານ.</u>*
*<u>ວັນທີ່ກຳນົດ ການລົງທະບຽນຂອງຜູ້ໂຫວດແມ່ນວັນເສົາ, ວັນທີ 24 ຕຸລາ 2020.</u>*

## ວັນທີທີ່ສຳຄັນ

- ວັນເສົາ, ວັນທີ 17 ຕຸລາ – ວັນສຸກ, 30 ຕຸລາ –ໄລຍະເວລາການໂຫວດລ່ວງໜ້າ
- ວັນອັງຄານ, ວັນທີ 20 ຕຸລາ –ແນະນຳຜູ້ໂຫວດຂໍສະໝັກເອົາ ບັດລົງຄະແນນສຳລັບຜູ້ທີ່ບໍ່ຕ້ອງການໄປສະຖານທີ່ໂຫວດ (absentee ballot) ກ່ອນວັນນີ້ເພື່ອຮັບປະກັນມີເວລາທີ່ພຽງພໍໃນການຮັບ ແລະ ສົ່ງຄືນບັດລົງຄະແນນຂອງພວກເຂົາ.
- ວັນເສົາ, ວັນທີ 24 ຕຸລາ – ເວລາກຳນົດໃນການລົງທະບຽນເພື່ອໂຫວດ.
- ວັນອັງຄານ, ວັນທີ 3 ພະຈິກ – ວັນເລືອກຕັ້ງ! ໂຫວດດ້ວຍຕົນເອງທີ່ສະຖານທີ່ລົງຄະແນນ ຫລື ຕ້ອງແນ່ໃຈວ່າ ການໂຫວດທາງໄປສະນີ/ບັດລົງຄະແນນສຳລັບຜູ້ທີ່ບໍ່ຕ້ອງການໄປສະຖານທີ່ໂຫວດຖືກກາເຄື່ອງໝາຍໄປສະນີພາຍໃນວັນນີ້.

## ການລົງທະບຽນຂອງຜູ້ໂຫວດ: ທ່ານລົງທະບຽນແລ້ວບໍ?

- ທ່ານໄດ້ລົງທະບຽນເພື່ອໂຫວດມາກ່ອນບໍ?
  - ແມ່ນ

- ຢືນຢັນທ່ານຍັງຄົງລົງທະບຽນໃນບ່ອນທີ່ທ່ານອາໄສຢູ່ໃນປັດຈຸບັນ: https://www.sec.state.ma.us/VoterRegistrationSearch/MyVoterRegStatus.aspx
- ຫາກທ່ານບໍ່ໄດ້ລົງທະບຽນອີກຕໍ່ໄປ, ໃຫ້ລົງທະບຽນຄືນໃໝ່ມື້ນີ້: https://www.sec.state.ma.us/OVR/
- ຖ້າທ່ານບໍ່ໄດ້ລົງທະບຽນທີ່ສະຖານທີ່ຖືກຕ້ອງ, ໃຫ້ປັບປຸງການລົງທະບຽນຂອງທ່ານ: https://www.sec.state.ma.us/OVR/

- ບໍ່
  - ລົງທະບຽນ ມື້ນີ້!
    - ອອນລາຍ: https://www.sec.state.ma.us/OVR/
      - ຂໍ້ຮຽກຮ້ອງ: ໃບຂັບຂີ່ ຫລື ບັດ ID ລັດທີ່ອອກໃຫ້ໂດຍ Massachusetts Registry of Motor Vehicles (ກົມຂົນສົ່ງທາງບົກແຫ່ງລັດ ແມຊາຊູເຊັດສ໌)
      - ຍັງມີໃຫ້ໃນ: ພາສາຂະເໝນ, ຈີນ ແລະ ສະເປນ
    - ໄປສະນີ:
      - ທ່ານອາດດາວໂຫລດ ແບບຟອມການລົງທະບຽນຂອງຜູ້ໂຫວດລົງຄະແນນ. ຟອມຕ້ອງສຳເລັດ, ເຊັນ ແລະ ສົ່ງໄປທີ່ local election official (ເຈົ້າໜ້າທີ່ການເລືອກຕັ້ງທ້ອງຖິ່ນ) ຂອງທ່ານ. ຟອມການລົງທະບຽນຂອງຜູ້ໂຫວດທີ່ສົ່ງມອບທາງໄປສະນີຕ້ອງຖືກກາເຄື່ອງໝາຍໄປສະນີບໍ່ຊ້າກວ່າ ວັນກຳນົດ ການລົງທະບຽນຂອງຜູ້ໂຫວດ:
        - ອັງກິດ
        - ສະເປນ
        - ຈີນ
        - ຂະເໝນ
        - ຄາເປ ເວີດຽນ ຄຣີໂອລ
        - ໄຮຕຽນ ຄຣີໂອລ
        - ໂປຣຕູກີສ
        - ຣັດເຊຍ
        - ຫວຽດນາມ
      - ການນຳໃຊ້ ຟອມການລົງທະບຽນຂອງຜູ້ໂຫວດທາງໄປສະນີແຫ່ງຊາດ: https://www.eac.gov/voters/national-mail-voter-registration-form
        - National Mail Voter Registration Form (ຟອມການລົງທະບຽນຂອງຜູ້ໂຫວດທາງໄປສະນີແຫ່ງຊາດ) ສາມາດຖືກໃຊ້ເພື່ອລົງທະບຽນພົນລະເມືອງສັນຊາດສະຫະລັດເພື່ອໂຫວດ, ເພື່ອປັບປຸງ ຂໍ້ມູນການລົງທະບຽນຍ້ອນການປ່ຽນຊື່, ການປ່ຽນທີ່ຢູ່ ຫລື ເພື່ອລົງທະບຽນກັບພັກການເມືອງ.
        - ທ່ານຕ້ອງປະຕິບັດຕາມຄຳແນະນຳສະເພາະຂອງລັດທີ່ລະບຸສຳລັບລັດຂອງທ່ານ. ພວກມັນເລີ່ມໃນໜ້າ 3 ຂອງແບບຟອມ ແລະ ຖືກລະບຸຊື່ລັດຕາມຕົວອັກສອນ. ພາຍຫລັງຕື່ມຟອມແລ້ວ, ທ່ານຕ້ອງເຊັນຊື່ຂອງທ່ານບ່ອນທີ່ສະແດງ ແລະ ສົ່ງມັນໄປເຖິງ ຫ້ອງການເລືອກຕັ້ງປະຈຳລັດ ຫລື ທ້ອງຖິ່ນຂອງທ່ານເພື່ອດຳເນີນການ. ແນ່ໃຈວ່າທ່ານສົ່ງມັນໃນຊອງຈົດໝາຍທີ່ມີ ຈຳນວນຄ່າໄປສະນີທີ່ເໝາະສົມ.
        - ດາວໂຫຼດຟອມໃນ 15 ພາສາ:
          - National Mail Voter Registration Form – English
          - طلب تسجيل الناخب – Arabic
          - জাতীয় ডাক ভোটার নিবন্ধন ফরম – Bengali
          - 国家邮件选民登记表 – Chinese

- Inscription sur les listes électorales – French
- Aplikasyon Enskripsyon Elektè –  Haitian Creole
- राष्ट्रीय डाक मतदाता पंजीकरण फॉर्म – Hindi
- 国立メール有権者登録フォーム – Japanese
- ទម្រង់បែបបទនៃការចុះឈ្មោះអ្នកបោះឆ្នោតថ្នាក់ជាតិ – Khmer
- 전국 우편 유권자 등록 양식 – Korean
- Solicitação para cadastro de eleitor – Portuguese
- Заявка на регистрацию избирателя – Russian
- Formulario nacional de inscripción de votantes – Spanish
- National Mail Form ng Pagpaparehistro ng Botante – Tagalog
- Mẫu đăng ký quốc gia Thư cử tri – Vietnamese

  - ແນ່ໃຈວ່າທ່ານມີເອກະສານທີ່ຈຳເປັນເພື່ອລົງທະບຽນ.

## ໂຫວດທາງໄປສະນີ (VBM)

ບັດເລືອກຕັ້ງ VBM/ບັດເລືອກຕັ້ງ (Absentee ballot) ແມ່ນມີໃຫ້ຜູ້ໂຫວດທຸກຄົນສຳລັບການເລືອກຕັ້ງທັງໝົດໃນປີ 2020. ທ່ານບໍ່ຈຳເປັນຫາເຫດຜົນໃນການໂຫວດທາງອີເມວປີນີ້.

- ທ່ານໄດ້ຮ້ອງຂໍ VBM/ ບັດເລືອກຕັ້ງ Absentee ballot?
  - ແມ່ນ
    - ຕິດຕາມ VBM/ບັດເລືອກຕັ້ງAbsentee ballot ຂອງທ່ານທີ່ນີ້: https://www.sec.state.ma.us/wheredoivotema/track/trackmyballot.aspx
  - ບໍ່
    - ຖ້າທ່ານຕ້ອງການຮ້ອງຂໍ ບັດ VBM/ ບັດເລືອກຕັ້ງ Absentee ballot,  ຍັງຄົງມີເວລາໃນການຮ້ອງຂໍມັນ.
      - ເວລາກຳນົດການຮ້ອງຂໍ ບັດ VBM/ບັດເລືອກຕັ້ງ Absentee ballot ແມ່ນວັນພຸດ ວັນທີ 28 ຕຸລາ. ເພື່ອຮັບປະກັນການສົ່ງບັດເລືອກຕັ້ງຂອງທ່ານທັນເວລາ, ແນະນຳໃຫ້ ທ່ານສົ່ງໃບຄຳຮ້ອງຂອງທ່ານສຳລັບ ບັດເລືອກຕັ້ງເດືອນພະຈິກບໍ່ຊ້າເກີນ ວັນອັງຄານ ວັນທີ 20 ຕຸລາ.
      - ທ່ານຕ້ອງເປັນຜູ້ໂຫວດ Massachusetts ທີ່ໄດ້ລົງທະບຽນ.
      - ສຳເລັດໃບຄຳຮ້ອງ ບັດ VBM/ບັດເລືອກຕັ້ງ Absentee ballot.
        - ອອນລາຍນ໌: https://www.sec.state.ma.us/VoterRegistrationSearch/preface.aspx
        - ດາວໂຫຼດ, ພິມ ແລະ ຕື່ມຟອມເອກະສານ: https://www.sec.state.ma.us/ele/elepdf/2020-Vote-by-Mail-Application.pdf
      - ສົ່ງ ໃບຄຳຮ້ອງຂອງທ່ານໃຫ້ local election office (ຫ້ອງການເລືອກຕັ້ງທ້ອງຖິ່ນ) ທາງໄປສະນີ, ສົ່ງໂດຍການຍື່ນໃຫ້, ອີເມວ ຫລື ແຟັກ ຫລື ສົ່ງ ຄຳຮ້ອງຂອງທ່ານຜ່ານທາງຊ່ອງທາງອອນລາຍ.
      - ໃບຄຳຮ້ອງ ບັດເລືອກຕັ້ງ VBM/ບັດເລືອກຕັ້ງ Absentee ballot ແມ່ນມີໃຫ້ ເປັນພາສາອັງກິດ, ສະເປນ, ຈີນ, ຂະເໝນ, ແລະຫວຽດນາມ.

- ຂ້າພະເຈົ້າຈະສົ່ງຄືນ ບັດເລືອກຕັ້ງ VBM/ບັດເລືອກຕັ້ງ Absentee Ballot ຂອງຕົນໄດ້ແນວໃດບໍ?
  - ຄຳແນະນຳແມ່ນລວມຢູ່ໃນພ້ອມກັບ VBM/ບັດເລືອກຕັ້ງ Absentee ballot. ສຳເລັດ ບັດເລືອກຕັ້ງ VBM/ບັດເລືອກຕັ້ງ Absentee ballot ໂດຍການປະຕິບັດຕາມພວກມັນຢ່າງເຂັ້ມງວດ.
  - ບັດເລືອກຕັ້ງ VBM/Absentee ballots ສາມາດສົ່ງທາງໄປສະນີ ຫຼື ສົ່ງຍື່ນໃຫ້ດ້ວຍຕົນເອງໄດ້.
    - ຖ້າທ່ານຕ້ອງການສົ່ງບັດເລືອກຕັ້ງ VBM/Absentee ballot ຂອງທ່ານ,

- ▪ ໃຫ້ສົ່ງບັດເລືອກຕັ້ງ VBM/Absentee ballot ທີ່ສົມບູນໃຫ້ເຈົ້າໜ້າທີ່ເລືອກຕັ້ງທ້ອງຖິ່ນຂອງທ່ານທີ່ສາລາກາງເມືອງ ຫລື ທາວນ໌ ຂອງທ່ານ. ຊອກຫາຂໍ້ມູນຕິດຕໍ່ສຳລັບເຈົ້າໜ້າທີ່ເລືອກຕັ້ງທ້ອງຖິ່ນທີ່ www.sec.state.ma.us/ele ຫລື ທາງໂທລະສັບ 1-800-462-VOTE (8683).
  - ປະບັດເລືອກຕັ້ງໄວ້ ໃນກ່ອງສົ່ງກັບຄືນບັດເລືອກຕັ້ງທາງການ. ຕິດຕໍ່ ຫ້ອງການເລືອກຕັ້ງທ້ອງຖິ່ນ ຂອງທ່ານສຳລັບທີ່ຕັ້ງຂອງກ່ອງສຳລັບສົ່ງບັດເລືອກຕັ້ງທີ່ປອດໄພໃດໜຶ່ງທີ່ພວກເຂົາຈັດໃຫ້ ສຳລັບສົ່ງຄືນບັດເລືອກຕັ້ງ.
  - ສົ່ງເຖິງທີ່ຕັ້ງການໂຫວດລ່ວງໜ້າໃດໜຶ່ງໃນຊ່ວງຊົ່ວໂມງການໂຫວດລ່ວງໜ້າ.
- ○ ຖ້າທ່ານວາງແຜນໃຊ້ ບໍລິການໄປສະນີ U.S ເພື່ອສົ່ງກັບ ບັດເລືອກຕັ້ງ VBM/Absentee ballot ຂອງທ່ານ,
  - ບໍລິການໄປສະນີ U.S ແນະນຳໃຫ້ສົ່ງຄຳຮ້ອງບໍ່ຊ້າເກີນວັນອັງຄານ, ວັນທີ 20 ຕຸລາ ເພື່ອຮັບປະກັນການສົ່ງບັດເລືອກຕັ້ງຂອງທ່ານໃຫ້ທັນເວລາ.
  - ບັດເລືອກຕັ້ງຕ້ອງຖືກກາເຄື່ອງໝາຍໄປສະນີບໍ່ເກີນວັນອັງຄານ, ວັນທີ 3 ພະຈິກ ແລະຖືກສົ່ງໃຫ້ຫ້ອງການເລືອກຕັ້ງທ້ອງຖິ່ນຂອງທ່ານ.

- ຕິດຕາມບັດເລືອກຕັ້ງ VBM/Absentee ballot ບ່ອນນີ້: www.TrackMyBallotMA.com
- ຫາແຜນໃໝ່ໃນການດຳເນີນການ ຫາກທ່ານບໍ່ໄດ້ຮັບບັດເລືອກຕັ້ງ ຫລື ບໍ່ໄດ້ຮັບມັນທັນເວລາ.

## ການໂຫວດໂດຍການໄປທີ່ສະຖານທີ່ເລືອກຕັ້ງ

- ຫາກທ່ານຕ້ອງການໂຫວດລ່ວງໜ້າ:
  - ການໂຫວດລ່ວງໜ້າແມ່ນມີໃຫ້ທາງໄປສະນີ ແລະ ການໄປໂຫວດໂດຍໄປທີ່ສະຖານທີ່ເລືອກຕັ້ງ ສຳລັບຜູ້ລົງຄະແນນທີ່ລົງທະບຽນທຸກຄົນ. ບໍ່ຈຳເປັນຕ້ອງ ຫາຂໍ້ແກ້ຕົວ.
  - ການໂຫວດລ່ວງໜ້າ ຂອງຜູ້ໄປໂຫວດໂດຍໄປທີ່ສະຖານທີ່ເລືອກຕັ້ງແມ່ນຈະເລີ່ມຈາກ ວັນເສົາ, ວັນທີ 17 ຕຸລາ –ວັນສຸກ 30 ຕຸລາ.
  - ຕາຕະລາງເວລາການໂຫວດລ່ວງໜ້າ ແລະ ທີ່ຕັ້ງສຳລັບແຕ່ລະເມືອງ ແລະ ທາວນ໌ ແມ່ນປະກາດໃນ www.MassEarlyVote.com.

- ຖ້າທ່ານວາງແຜນໂຫວດໃນ ວັນເລືອກຕັ້ງ:
  - ຈະໂຫວດຢູ່ໃສ: https://www.sec.state.ma.us/wheredoivotema/bal/MyElectionInfo.aspx
  - ທ່ານອາດຖືກຂໍໃຫ້ສະແດງບັດປະຈຳຕົວເມື່ອທ່ານເຊັກອິນທີ່ ສະຖານທີ່ລົງຄະແນນສຳລັບເຫດຜົນຕໍ່ໄປນີ້:
    - ○ ທ່ານໂຫວດເທື່ອທຳອິດໃນລັດ Massachusetts ໃນການເລືອກຕັ້ງລະດັບສູນກາງ;
    - ○ ທ່ານແມ່ນຜູ້ໂຫວດແບບ ອິນແອັກທີບ; (ຜູ້ທີ່ບໍ່ໄດ້ຮັບຕົວຢ່າງບັດເລືອກຕັ້ງທາງໄປສະນີ)
    - ○ ທ່ານຈະກາ ບັດເລືອກຕັ້ງແບບ provisional ballot (ໃຊ້ເພື່ອບັນທຶກເມື່ອມີຄຳຖາມໃນສິດທິຂອງການໂຫວດ) ຫຼື ບັດເລືອກຕັ້ງແບບ challenged ballot (ບັດທີ່ໃຫ້ບຸກຄົນຜູ້ອ້າງວ່າໄດ້ລົງທະບຽນແລ້ວ ແຕ່ສະຖານະການມີສິດບໍ່ໄດ້ຖືກຢືນຢັນ);
    - ○ ພະນັກງານເລືອກຕັ້ງມີຂໍ້ສົງໄສທີ່ມີເຫດມີຜົນທີ່ເຮັດໃຫ້ພວກເຂົາຕ້ອງຮ້ອງຂໍການຢືນຢັນຕົວຕົນ.
    - ○ ການຢືນຢັນຕົວຕົນທີ່ຍອມຮັບຕ້ອງລວມທັງ ຊື່ ແລະ ທີ່ຢູ່ຂອງທ່ານໃນບ່ອນທີ່ທ່ານລົງທະບຽນໂຫວດ. ຕົວຢ່າງຂອງການຢືນຢັນຕົວຕົນທີ່ຍອມຮັບໄດ້ລວມມີ: ໃບຂັບຂີ່, ບັດປະຈຳຕົວອອກໃຫ້ໂດຍລັດ, ໃບບິນຄ່ານ້ຳຄ່າໄຟຫລ້າສຸດ, ການເຊົ່າ, ສຳເນົາຄຳໃຫ້ການການລົງທະບຽນຂອງຜູ້ໂຫວດ ຫລື ເອກະສານການຢືນຢັນຕົວຕົນອື່ນໆ ເຊິ່ງມີ ຊື່ ແລະ ທີ່ຢູ່ຂອງຜູ້ໂຫວດ.
    - ○ ຖ້າທ່ານໂຫວດເທື່ອທຳອິດໃນການເລືອກຕັ້ງລະດັບສູນກາງໃນລັດ Massachusetts ຫລັງຈາກລົງທະບຽນໂຫວດທາງໄປສະນີ, ທ່ານອາດຖືກຮ້ອງຂໍໃຫ້ສະແດງການຢືນຢັນຕົວຕົນພາຍໃຕ້

ກົດໝາຍລັດຖະບານກາງ. ແນະນຳວ່າທ່ານລວມເອົາ ສຳເນົາເອກະສານການຢືນຢັນຕົວຕົນຂອງທ່ານໃສ່ກັບພອມການລົງທະບຽນຂອງຜູ້ໂຫວດທາງໄປສະນີ; ຫາກທ່ານເລືອກບໍ່ເຮັດດັ່ງກ່າວ, ທ່ານອາດຈະຖືກຮ້ອງຂໍສຳລັບການຢືນຢັນຕົວຕົນເມື່ອທ່ານໄປທີ່ ສະຖານທີ່ລົງຄະແນນໃນວັນເລືອກຕັ້ງ.
ຖ້າທ່ານບໍ່ສາມາດສະແດງເອກະສານຢືນຢັນຕົວຕົນເມື່ອທ່ານເຊັກອິນ, ທ່ານອາດກາ ບັດແບບ provisional ballot ແລະ ສົ່ງກັບຄືນພາຍຫລັງພ້ອມກັບເອກະສານຢືນຢັນຕົວຕົນ. ຖ້າທ່ານບໍ່ສົ່ງກັບພ້ອມກັບເອກະສານຢືນຢັນຕົວຕົນທີ່ຍອມຮັບລະຫວ່າງການປິດການເລືອກຕັ້ງ, ບັດເລືອກຕັ້ງຂອງທ່ານຈະບໍ່ຖືກນັບໄດ້.

- ທ່ານອາດຍັງຈະຖືກຂໍໃຫ້ສະແດງເອກະສານຢືນຢັນຕົວຕົນຫາກທ່ານຢູ່ໃນບັນຊີ ຜູ້ໂຫວດແບບອິນແອັກທິບ (Inactive voters) ຫລື ຫາກ ພະນັກງານການເລືອກຕັ້ງມີເຫດຜົນໃນການຮ້ອງຂໍມັນ.
  ຖ້າທ່ານບໍ່ສາມາດສະແດງເອກະສານຢືນຢັນຕົວຕົນໃນສະພາບການດັ່ງກ່າວ, ທ່ານຍັງຈະໄດ້ອະນຸຍາດໃນການໂຫວດ; ແຕ່, ບັດເລືອກຕັ້ງຂອງທ່ານຈະເປັນແບບ challenged ballot. ນີ້ໝາຍວ່າຊື່ ແລະ ທີ່ຢູ່ຂອງທ່ານ, ຊື່ ແລະ ທີ່ຢູ່ຂອງຜູ້ທ້າທາຍ ຫລື challenger ແລະ ເຫດຜົນສຳລັບການທ້າທາຍຕ້ອງຖືກຂຽນເທິງ ບັດເລືອກຕັ້ງ. ບັດເລືອກຕັ້ງຂອງທ່ານຈະຖືກກາປົກກະຕິ ແລະ ຈະຖືກກວດກາໃນກໍລະນີ ການນັບໃໝ່, ຄຳສັ່ງສານ ຫລື ການກວດສອບເທົ່ານັ້ນ.

- ຮູ້ຈັກສິດທິຂອງທ່ານ: ບັດແບບ Provisional Ballots
  - ຫາກການລົງທະບຽນຂອງທ່ານບໍ່ສາມາດຖືກຢືນຢັນທີ່ ສະຖານທີ່ເລືອກຕັ້ງ, ທ່ານອາດຍັງສາມາດກາບັດແບບ provisional ballot. ພະນັກງານການເລືອກຕັ້ງຈະແນະນຳທ່ານໃນການສຳເລັດການຊ່ວຍເຫຼືອການກາບັດ provisional ballot, ເຊິ່ງທ່ານອາດສະໜອງລາຍລະອຽດກ່ຽວກັບ ທ່ານລົງທະບຽນໂຫວດເມື່ອໃດ ແລະ ຢູ່ໃສ. ທ່ານຈະຖືກຂໍໃຫ້ສະແດງເອກະສານຢືນຢັນຕົວຕົນ.

## ການຊ່ວຍເຫຼືອດ້ານພາສາ

ທ່ານມີສິດສຳລັບການຊ່ວຍເຫລືອທາງດ້ານພາສາຂະນະທີ່ໂຫວດ.

- ມາດຕາ 203 ຂອງກົດໝາຍວ່າດ້ວຍ ສິດທິໃນການລົງຄະແນນ ຮຽກຮ້ອງ ຂອບເຂດອຳນາດໜຶ່ງໆໃນການສະໜອງເອກະສານການໂຫວດໃນພາສາ ໃນຂົງເຂດທີ່ມີຜູ້ໂຫວດຈຳນວນຫລວງຫລາຍທີ່ມີຄວາມສາມາດຈຳກັດໃນພາສາອັງກິດ. ໃນ Massachusetts, Quincy City ແລະ Malden City ຕ້ອງສະໜອງເອກະສານເປັນພາສາຈີນ ແລະ Lowell City ເປັນພາສາຂະເໝນ.
- ພາຍໃຕ້ມາດຕາ 208 ຂອງກົດໝາຍວ່າດ້ວຍສິດທິໃນການລົງຄະແນນ ທ່ານສາມາດ ພາ *ລ່າມພາສາ ຫລື ນາຍແປພາສາຂອງທ່ານເອງໄປທີ່ບ່ອນເລືອກຕັ້ງ, ຕາບໃດພວກເຂົາບໍ່ແມ່ນນາຍຈ້າງຂອງທ່ານ ຫລື ຕົວແທນຂອງສະມາຄົມ.*
  - **ເຄັດລັບ: ຖ້າທ່ານຕ້ອງການ ການຊ່ວຍເຫຼືອດ້ານພາສາ, ຂໍຄວາມຊ່ວຍເຫຼືອໄດ້ ແລະ ຊອກຫາບຸກຄົນທີ່ຕ້ອງການຊ່ວຍ!**
- ກວດເບິ່ງກົດໝາຍແຫ່ງລັດ ສຳລັບ ການຊ່ວຍເຫຼືອດ້ານພາສາເພີ່ມຕື່ມໃດໜຶ່ງ.

***ສຳລັບຂໍ້ມູນເພີ່ມຕື່ມ, ເຂົ້າໄປທີ່:***

https://www.sec.state.ma.us/ele/eleidx.htm

www.advancingjustice-aajc.org/election2020

**ຖ້າທ່ານມີຄຳຖາມໃດໜຶ່ງກ່ຽວກັບ ການໂຫວດ, ບໍ່ວ່າຈະເປັນຄຳຖາມທີ່ໃຫຍ່ ຫລື ນ້ອຍ,**

ໂທຫາພວກເຮົາທີ່ 1-888-API-VOTE (1-888-274-8683) ສຳລັບຊ່ວຍເຫຼືອໃນ English, Mandarin (普通話), Cantonese (廣東話), Korean (한국어), Vietnamese (tiếng Việt), Tagalog, Urdu (اردو), Hindi (हिंदी), ແລະ Bengali/Bangla (বাংলা). ພວກເຮົາພ້ອມໃນການສະໜອງ ການຊ່ວຍເຫຼືອ ຈົນຮອດໃນວັນ ຫລັງວັນເລືອກຕັ້ງ.